**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4156 /ຕປທ.ພທກ

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

**ເຖິງ: ບັນດາບໍລິສັດສະໜອງການຕັດເຄື່ອງ**

**ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງການຕັດເຄື່ອງໃຫ້ແກ່ພະນັກງານປະສານງານ ແລະ ພະນັກງານຊ່ວຍວຽກ ເພື່ອຮັບໃຊ້ໃຫ້ແກ່ການເປັນປະທານກອງປະຊຸມອາຊຽນ ຂອງ ສປປ ລາວ ໃນປີ 2024, ຊຶ່ງຈະຈັດຂຶ້ນໃນວັນທີ 06-11 ຕຸລາ 2024 ທີ່ ຄອນຫຼວງວຽງຈັນ.**

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 24 ເມສາ 2024.

ກົມພິທີການທູດ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ສະໜອງການຕັດເຄື່ອງ ໃຫ້ແກ່ ພະນັກງານປະສານງານ ແລະ ພະນັກງານຊ່ວຍວຽກ ເພື່ອຮັບໃຊ້ໃຫ້ແກ່ການເປັນປະທານກອງປະຊຸມອາຊຽນ ຂອງ ສປປ ລາວ ໃນປີ 2024, ຊຶ່ງຈະຈັດຂຶ້ນໃນວັນທີ 06-11 ຕຸລາ 2024 ທີ່ ນະຄອນຫຼວງວຽງຈັນ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມພິທີການທູດ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 1, ຕຶກ B, ໂທລະສັບ: 021- 454126) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 25 ມິຖຸນາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມພິທີການ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 08:30 ໂມງ ຂອງ ວັນທີ 11 ກໍລະກົດ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆ ຊອງປະມູນຈະໄດ້ເປີດ ໃນເວລາ 09:00 ໂມງ ຂອງວັນທີ 11 ກໍລະກົດ 2024 ທີ່ ຫ້ອງປະຊຸມກົມພິທີການ ຊັ້ນ 1, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ

**ຫົວໜ້າກົມ**

ອຳໄພ ກົມດາວົງ

Scanned with OKEN Scanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4157 /ຕປທ.ພທກ
ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

# ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍ ທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນສະໜອງການຕັດເຄື່ອງ ໃຫ້ແກ່ພະນັກງານປະສານງານ ແລະ ພະນັກງານຊ່ວຍວຽກ ໃຫ້ແກ່ພະນັກງານປະສານງານ ແລະ ພະນັກງານຊ່ວຍວຽກ ເພື່ອຮັບໃຊ້ໃຫ້ແກ່ການເປັນປະທານກອງປະຊຸມ ຂອງ ສປປ ລາວ ໃນປີ 2024, ຊຶ່ງຈະຈັດຂຶ້ນໃນວັນທີ 06-11 ຕຸລາ 2024 ທີ່ ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

**ເງື່ອນໄຂທົ່ວໄປ**

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ (ກ່ອບປີ້ດ້ານຫຼັງມາພ້ອມ);
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ ປະຈຳປີ 2023 ຫຼື 2024;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2024 ຫຼື 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ,
5. ຕ້ອງມີເງິນຄ້ຳປະກັນຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
6. ບໍລິສັດຕ້ອງມີອຸປະກອນທີ່ໄດ້ມາດຕະຖານ, ມີຈຳນວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບ ຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
7. ບໍລິສັດຕ້ອງສະໜອງການຕັດເຄື່ອງໃຫ້ພະນັກງານ LO ແລະ ພະນັກງານຊ່ວຍວຽກ ຈຳນວນ 450 ທ່ານ ແລະ ອາສາສະໝັກຊ່ວຍວຽກ ຈຳນວນ 150 ທ່ານ;
8. ຊອງປະມູນມີ 01 ຊອງ ຄື: ກາແດງ 01 ຊຸດ ແລະ ກ່ອບປີ້ 01 ຊຸດ;
9. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແລະ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

**ຫົວໜ້າກົມ**

ກະຊວງການຕ່າງປະເທດ ກົມພິທີການທູດ

ອຳໄພ ກິນດາວົງ

Scanned with OKEN Scanner